ເລື່ອງ ມະນຸດ



# ເລື່ອງ ມະນຸດ





ແຕ່ສ່ວນຫຼາຍມະນຸດທົ່ວໄປ ບໍ່ໄດ້ຟັງ, ບໍ່ໄດ້ປະຕິບັດຕາມ ຄຳສັ່ງ 10 ປະການນີ້.

ເຮັດໃຫ້ສັງຄົມຢູ່ໃນທົ່ວໂລກເກີດບັນຫາຫຼາຍສິ່ງຫຼາຍຢ່າງ ຈົນຮອດທຸກມື້ນີ້.

ຖ້າທ່ານຢາກຮູ້ຈັກລາຍລະອຽດເລື່ອງເພິ່ນຜູ້ສ້າງຜູ້ແຕ່ງ, ເລື່ອງຄູ່ທຳອິດ, ເລື່ອງການບູຊາຜູ້ສັກສິດສູງສຸດ, ເລື່ອງນ້ຳຖ້ວມໂລກ, ເລື່ອງຄຳສັ່ງ 10 ຂໍ້ ແລະ ເລື່ອງອື່ນໆ ເຊິ່ງມີຄ່າຫຼາຍທີ່ສຸດ ໃຫ້ອ່ານ ປຶ້ມພຣະຄຳພີ ຂອງຊາວຄຣິດ.



ຫຼັງຈາກນັ້ນປູ່ຍ່າຕາຍາຍກໍໄດ້ຮັບຄຳສັ່ງ 10 ຂໍ້ ຈາກເພິ່ນຜູ້ສ້າງວ່າ:

1. ຢ່ານົບສິ່ງອື່ນໆ ນອກຈາກເພິ່ນຜູ້ສ້າງມະນຸດຂຶ້ນມາ
2. ຢ່ານົບຫຼືຂາບໄຫ້ວຮູບໃດໆ ແທນທີ່ຈະນົບເພິ່ນຜູ້ສ້າງຜູ້ດຽວ
3. ຢ່າໃຊ້ຊື່ຂອງເພິ່ນຜູ້ສ້າງໃນທາງຊົ່ວຮ້າຍ
4. ຈົ່ງຖືມື້ສັກສິດເປັນມື້ບໍລິສຸດ
5. ຈົ່ງນັບຖືພໍ່ແມ່ນຂອງເຈົ້າ
6. ຢ່າຂ້າຄົນ
7. ຢ່າຫຼິ້ນຊູ້ກັບຜົວເມຍຜູ້ອື່ນ
8. ຢ່າເປັນຄົນຂີ້ລັກ
9. ຢ່າໃສ່ຮ້າຍປ້າຍສີເພື່ອນມະນຸດ
10. ຢ່າຢາກໄດ້ສິ່ງຂອງທີ່ໝູ່ເພື່ອນມີຢູ່



## ເລື່ອງ ມະນຸດ

ນັບຕັ້ງແຕ່ສະໄໝດຶກດຳບັນເປັນຕົ້ນມາ, ປະຊາຊົນ ລາວເຮົາກໍມີເລື່ອງພື້ນເມືອງຫຼາຍໆເລື່ອງ ແລະ ກໍຍັງມີເລື່ອງມະນຸດຄູ່ທຳອິດ, ເລື່ອງ ນ້ຳຖ້ວມໂລກ ແລະ ເລື່ອງຫຼັກການຄຳສອນການດຳເນີນຊີວິດ. ແຕ່ເປັນເພາະສະໄໝກ່ອນນັ້ນ ຄົນລາວບໍ່ໄດ້ບັນທຶກເລື່ອງດັ່ງກ່າວນີ້ໄວ້ ພຽງແຕ່ເລົ່າປາກຕໍ່ປາກເທົ່ານັ້ນ.

ໃນປື້ມເຫຼັ້ມນີ້ສ່ວນຫຼາຍຈະເລົ່າກ່ຽວກັບມະນຸດຄູ່ທຳອິດ, ເລື່ອງນ້ຳຖວ້ມໂລກ ແລະ ເລື່ອງຫຼັກຄຳສອນການດຳເນີນຊີວິດ ຕາມແຕ່ລະຕອນຂຶ້ນມາທັງໝົດ.

ຂໍໃຫ້ທ່ານຜູ້ອ່ານຈົ່ງມີສັນຕິສຸກໃນການອ່ານ ທີ່ຈະພົບກັບຄວາມເປັນຈິງ ແລະ ເລື່ອງທີ່ສຳຄັນເຫຼົ່ານີ້.



ແຕ່ກີ້ແຕ່ກ່ອນ ເຫິງນານມາແລ້ວ ຍັງມີເລື່ອງພື້ນເມືອງທີ່ໄດ້ບັນທຶກໄວ້ໃນໜັງສືບູຮານຄື: ປະຖົມມະການ.

ໃນຕອນນັ້ນຜູ້ຄົນໃນເມືອງສາມາດຕິດຕໍ່ໄປມາຫາສູ່ກັບຜູ້ສ້າງຜູ້ແຕ່ງ ຄືຜູ້ສັກສິດເໜືອສິ່ງສັກສິດສະກົນນະໂລກ ໃນເມືອງຟ້າໄດ້.

ຢູ່ໃນເມືອງມະນຸດນີ້ ມີຄົນອາໃສຢູ່ກ່ອນໝູ່ໝົດສອງຄົນຄື ປູ່ສັງກະສາ ແລະ ຍ່າສັງກະສີ.





ຕໍ່ມາມະນຸດກໍໄດ້ແບ່ງອອກເປັນສາມພວກຄື ໂນອາມີລູກຊາຍສາມຄົນຄື: ເຊມ, ຮາມ ແລະ ຢາເຟດ.

ພວກເຂົາທັງສາມເປັນບັນພະບູລຸດຂອງປະຊາຊາດທັງໝົດທີ່ຢູ່ເທິງແຜ່ນດິນໂລກໃນປະຈຸບັນນີ້.



ຫຼັງຈາກທີ່ນ້ຳໄດ້ບົກແຫ້ງລົງແລ້ວ ຜູ້ສ້າງຜູ້ແຕ່ງໄດ້ສັນຍາວ່າ "ຕໍ່ໄປເຮົາຈະບໍ່ທຳລາຍທຸກສິ່ງທີ່ມີຊີວິດດ້ວຍການເຮັດນ້ຳຖ້ວມອີກ".

ແລ້ວເພິ່ນຜູ້ສ້າງໄດ້ສ້າງເຄື່ອງໝາຍຂອງຄຳສັນຍາຕະຫຼອດໄປ ຄືເພິ່ນຜູ້ສ້າງໄດ້ສ້າງຮຸ້ງກິນນ້ຳໄວ້ເທິງທ້ອງຟ້າ.





ຕໍ່ຈາກນັ້ນບໍ່ດົນກໍໄດ້ເກີດລູກຫຼານບໍລິວານເປັນຈຳນວນຫຼວງຫຼາຍ ຢັ່ງຢາຍກັນຢູ່ທົ່ວເມືອງລຸ່ມ. ເພິ່ນຜູ້ສ້າງຜູ້ແຕ່ງເຄີຍສັ່ງ  ປູ່ສັງກະສາໄວ້ວ່າ ຕ້ອງຂ້າສັດຖວາຍເພື່ອລ້າງຄວາມບາບແລະ ຄວາມຊົ່ວ ແຕ່ປູ່ສັງກະສາ ແລະ ຍ່າສັງກະສີ ພ້ອມດ້ວຍລູກບໍລິວານ ບໍ່ໄດ້ປະຕິບັດຕາມພໍເທົ່າໃດ.



ເພິ່ນຜູ້ສ້າງຈຶ່ງເສຍໃຈ ແລະ ກິນແໜງໃຈຫຼາຍ ທີ່ລູກຫຼານຂອງປູ່ສັງກະສາ ແລະ ຍ່າສັງກະສີບໍ່ເຊື່ອຟັງ ຈຶ່ງບັນດານໃຫ້ນໍ້າຖ້ວມໃນເມືອງລຸ່ມ.

ລູກຫຼານຂອງປູ່ສັງກະສາ ແລະ ຍ່າສັງກະສີກໍໄດ້ຈົມນໍ້າຕາຍໝົດສິ້ນ ທຸກສິ່ງທີ່ຫາຍໃຈຢູ່ແຜ່ນດິນໂລກກໍໄດ້ຕາຍໄປໝົດ.





ຍັງເຫຼືອໄວ້ພຽງແຕ່ຄົນດີທີ່ຊື່ ໂນອາ, ເມຍຂອງລາວ, ລູກຊາຍທັງສາມ ແລະ ລູກເມຍຂອງພວກເຂົາ ທີ່ໄດ້ລອດມາໃນເຮືອລຳໃຫ່ຍໆລຳໜຶ່ງ.